ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ກະຊວງການເງິນ

ເລກທີ 1530----/ກງ

ນະຄອນຫລວງວຽງຈັນ, ວັນທີ 20 MAY 2016

**ເຖິງ :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກໆຂັ້ນ, ພະນັກງານ, ທະຫານ, ຕໍາຫລວດ, ປະຊາຊົນທຸກຄົນ, ຊາວຕ່າງດ້າວ, ຊາວຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດ ຢູ່ດິນແດນ ສປປ ລາວ.

**<u>ເລື່ອງ</u> :** ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.

- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 019/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ລັດຖະດໍາລັດຂອງປະທານປະເທດ ສະບັບເລກທີ 023/ປປທ, ລົງວັນທີ 28 ມັງກອນ 2016;
- ອີງຕາມ ການລົງຈົດໝາຍເຫດທາງລັດຖະການຂອງກະຊວງຍຸຕິທໍາ ຄັ້ງວັນທີ 09 ພຶດສະພາ 2016.

ກະຊວງການເງິນ ຂໍຖືເປັນກຽດ ແຈ້ງມາເພື່ອຊາບ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015, ຊຶ່ງມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສ ປປ ລາວ ອອກລັດຖະດໍາລັດປະກາດໃຊ້ ແລະພາຍຫລັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ (ລົງໃນຈົດໝາຍເຫດວັນທີ 09 ພຶດສະພາ 2016) ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 100 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ, ສະນັ້ນ ກົດໝາຍສະບັບດັ່ງກ່າວ ແມ່ນມີຜົນນໍາໃຊ້ໄດ້ນັບແຕ່ວັນທີ 24 ພຶດສະພາ 2016 ເປັນຕົ້ນໄປ.

ດັ່ງນັ້ນ ຈຶ່ງແຈ້ງມາເພື່ອຊາບ ແລະຈັດຕັ້ງປະຕິບັດ.

ລັດຖະມົນຕີກະຊວງການເງິນ

ລ. ທິ ແກ້ວ